# ການສຶກສາ ດ້ານ ການຄຸ້ມຄອງເດັກ

## ຂໍ້ມູນ ສໍາລັບ ບັນດາ ພໍ່ແມ່ ແລະ ຜູ້ດູແລ

| | |
|---|---|
| ຊື່ ໂຮງຮຽນ<br>Name of school | |
| ຊັ້ນຮຽນທີ່ເຂົ້າຮ່ວມ<br>Participating Year/s | |
| ຈໍານວນບົດຮຽນຕໍ່ອາທິດ<br>Number of lessons per week | |
| ຜູ້ຕິດຕໍ່ຂອງໂຮງຮຽນ<br>School contact person | |
| ນໍາເບີໂທຣະສັບສໍາລັບຕິດຕໍ່<br>Contact telephone number | |

ບັນດາພໍ່ແມ່ ແລະ ຜູ້ດູແລ ທີ່ຮັກແພງ

ປີນີ້ ບັນດານັກຮຽນໃນປີທີ່ສະແດງໃຫ້ເຫັນຢູ່ຂ້າງເທິງນີ້ຈະມີສ່ວນຮ່ວມໃນຫົວຂໍ້ທີ່ຕ້ອງບັງຄັບໃນການສຶກສາ ການພັດທະນາສວນບຸກຄົນ, ສຸຂະ ພາບ ແລະ ຮ່າງກາຍ (Personal Development, Health and Physical Education (PDHPE)).

ສ່ວນນຶ່ງ ຂອງໂຄງການ PDHPE ຂອງໂຮງຮຽນພວກເຮົາຮວມເອົາການສຶກສາແບບບັງຄັບ ດ້ານການຄຸ້ມຄອງເດັກ. ບາງເນື້ອໃນທີ່ສອນໃນການສຶກສາດ້ານການຄຸ້ມຄອງເດັກແມ່ນກ່ຽວຂ້ອງກັບບັນຫາທີ່ລະອຽດອ່ອນ. ໂຮງຮຽນຈະສອນເນື້ອໃນນີ້ໃນແບບທີ່ ເໝາະສົມກັບອາຍຸ.

ເນື້ອໃນສະເພາະທີ່ຈະຖືກກວມເອົາໃນການສຶກສາດ້ານການຄຸ້ມຄອງເດັກ ນີ້ ແມ່ນສະແດງຢູ່ ໜ້າ ຕໍ່ໄປ.

ສໍາ ລັບຂໍ້ມູນເພີ້ມເຕີມກ່ຽວກັບການສຶກສາດ້ານການຄຸ້ມຄອງເດັກ ຈົ່ງເຂົ້າໄປເບິ່ງຢູ່ພາກ Child protection and respectful relationships education (ການສຶກສາ ດ້ານການຄຸ້ມຄອງເດັກ ແລະ ຄວາມສໍາພັນທີ່ມີຄວາມເຄົາລົບ ) ໃນເວັບໄຊຕ໌ PDHPE ຂອງກະຊວງສຶກສາ.

ຈໍາ ນວນບົດຮຽນຕໍ່ອາທິດໃນເທີມນີ້ ທີ່ຈະມີການສອນ ການສຶກສາດ້ານການຄຸ້ມຄອງເດັກຈະສະ ແດງຢູ່ຂ້າງເທິງ.

ຖ້າທ່ານຕ້ອງການຂໍ້ມູນເພີ້ມເຕີມ, ກະລຸນາຕິດຕໍ່ຫາ ຜູ້ຕິດຕໍ່ຂອງໂຮງຮຽນທີ່ມີຊື່ແລະເບີໂທລະສັບຢູ່ຂ້າງເທິງນີ້.

## ບໍລິການນາຍພາສາທາງໂທລະສັບ

ຖ້າທ່ານຕ້ອງການນາຍພາສາຊ່ວຍທ່ານໃນການຕິດຕໍ່ທາງໂຮງຮຽນ, ກະລຸນາໂທຫາ ບໍລິການນາຍພາສາທາງໂທລະສັບ ຕາມໝາຍເລກ 13 14 50 ແລະ ຂໍເອົານາຍພາສາເປັນພາສາຂອງທ່ານ. ຜູ້ຮັບສາຍຈະໂທຫາໂຮງຮຽນແລະເອົານາຍພາສາຢູ່ໃນສາຍເພື່ອຊ່ວຍໃນການສົນທະນາ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.

ດ້ວຍຄວາມຮັກແພງ

ທ່ານຄູໃຫຍ່ (Principal)

ເນື້ອໃນທີ່ຈະກວມເອົາໄວ້ໃນການສຶກສາດ້ານການຄຸ້ມຄອງເດັກລວມມີ:

The content which will be covered in child protection education includes:

(Staff to tick the relevant boxes below for Stage 2 content.)

- ☐ ສິດ ແລະ ຄວາມຮັບຜິດຊອບຕ່າງໆ
  Rights and responsibilities
- ☐ ສິດແລະຄວາມຮັບຜິດຊອບຕ່າງໆໃນຄວາມສຳພັນ
  Rights and responsibilities in relationships
- ☐ ອາລົມ ແລະ ສັນຍານເຕືອນໃນສະຖານະການຕ່າງໆ
  Emotions and warning signs in different situations
- ☐ ພະລັງໃນຄວາມສຳພັນ
  Power in relationships
- ☐ ພາກສ່ວນຕ່າງໆຂອງຮ່າງກາຍຂອງຜູ້ຊາຍແລະຜູ້ຍິງ ແລະ ການປ່ຽນແປງທີ່ກ່ຽວຂ້ອງກັບ ການເປັນວັຍຣຸ່ນ
  Male and female body parts and puberty related changes
- ☐ ຄວາມສຳພັນໃນທາງບວກ ແລະ ເຄືອຂ່າຍ  ການສນັບສນູນເພື່ອຮັບມືກັບການປ່ຽນແປງ
  Positive relationships and support networks to manage change
- ☐ ສິ່ງທີ່ເຊື່ອວ່າເປັນຮູບແບບຂອງເພດຍິງ-ຊາຍ ແລະ ຄວາມຄາດຫວັງ
  Gender stereotypes and expectations
- ☐ ປະເພດຂອງການລ່ວງລະເມີດ
  Types of abuse
- ☐ ພຶດຕິກຳ ແລະ ຍຸດທະສາດ ການກັ່ນແກ້ງ ເພື່ອຂໍຄວາມຊ່ວຍເຫລືອ
  Bullying behaviour and strategies to ask for help
- ☐ ການຮັບຮູ້ ແລະ ຕອບສນອງ ຕໍ່ ສະຖານະການ ທີ່ປອດໄພ ແລະ ບໍ່ປອດໄພ
  Recognising and responding to safe and unsafe situations
- ☐ ຍຸດທະສາດໃນການຢູ່ຢ່າງປອດໄພ ແລະ ຂໍຄວາມຊ່ວຍເຫຼືອ
  Strategies to stay safe and ask for help
- ☐ ການສື່ສານ ແລະ ຮ່ວມມືກັບຄົນອື່ນດ້ວຍຄວາມເຄົາລົບ
  Communicating and cooperating with others in a respectful way
- ☐ ທຳການຕັດສິນໃຈທີ່ຮອບຄອບ ແລະ ປອດໄພ
  Making informed and safe decisions